**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ຫ້ອງການ

ເລກທີ 1872 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 15 ກໍລະກົດ 2022

# ແຈ້ງການ

**ເຖິງ:** – ກົມພາສີ, ພາສີປະຈຳແຂວງ ຄຳມ່ວນ, ດ່ານພາສີສາກົນຂົວມິດຕະພາບ III, ດ່ານພາສີສາກົນ ນາເຜົ້າ, ຫ້ອງການພາສີປະຈຳເຂດເສດຖະສະເພາະທ່າແຂກ;

– ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານພັດທະນາລາວ;

– ບັນດາບໍລິສັດນຳເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງທຸກໆປະເພດ.

**ເລື່ອງ:** ການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window) ເຂົ້າສູ່ການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງທຸກໆປະເພດ ຢູ່ທີ່ດ່ານພາສີສາກົນຂົວມິດຕະພາບ III, ດ່ານພາສີສາກົນນາເຜົ້າ ແລະ ຫ້ອງການພາສີປະຈຳເຂດເສດຖະກິດສະເພາະທ່າແຂກ.

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ກະຊວງການເງິນ;
- ອີງຕາມ ບົດແນະນຳ ຂອງກະຊວງການເງິນ ສະບັບເລກທີ 4217/ກງ, ລົງວັນທີ 28 ທັນວາ 2018 ວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ;
- ອີງຕາມ ຂໍ້ຕົກລົງ ຂອງກະຊວງການເງິນ ສະບັບເລກທີ 0204/ກງ, ລົງວັນທີ 15 ມັງກອນ 2019 ວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ;
- ອີງຕາມ ຄຳແນະນຳເພີ່ມເຕີມ ຂອງກົມພາສີ ສະບັບເລກທີ 04145/ກພສ, ລົງວັນທີ 23 ພຶດສະພາ 2019 ວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ;
- ອີງຕາມ ໜັງສືສະເໜີ ຂອງກົມພາສີ, ສະບັບເລກທີ 04449 /ກພສ, ລົງວັນທີ 12 ກໍລະກົດ 2022.

ຫ້ອງການ ຂໍຖືເປັນກຽດແຈ້ງມາຍັງພາກສ່ວນກ່ຽວຂ້ອງ ຊາບ ກ່ຽວກັບ ການຫັນວຽກງານພາສີເປັນທັນສະໄໝ ດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຢູ່ດ່ານພາສີສາກົນຂົວມິດຕະພາບ III, ດ່ານພາສີສາກົນນາເຜົ້າ, ຫ້ອງການພາສີປະຈຳເຂດເສດຖະກິດສະເພາະທ່າແຂກ ແຂວງຄຳມ່ວນ ເຂົ້າໃນການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງທຸກປະເພດ. ສະນັ້ນ, ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ຈຶ່ງສະເໜີມາຍັງພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດ ດັ່ງນີ້:

1. ນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window “LNSW”) ໃນການຄຸ້ມຄອງການນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງ ທຸກໆປະເພດ ຜ່ານດ່ານພາສີສາກົນຂົວມິດຕະພາບ III, ດ່ານພາສີສາກົນນາເຜົ້າ, ຫ້ອງການພາສີປະຈຳເຂດເສດຖະກິດສະເພາະທ່າແຂກ ແຂວງຄຳມ່ວນ (ລວມທັງສິນຄ້າປະເພດຍົກເວັ້ນ ຫຼື ງົດເກັບພາສີ) ເລີ່ມແຕ່ວັນທີ **18 ກໍລະກົດ 2022** ເປັນຕົ້ນໄປ;

2. ໃຫ້ບັນດາຜູ້ປະກອບການທັງໝົດ ທີ່ນໍາເຂົ້າ-ສົ່ງອອກ ທຸກໆປະເພດສິນຄ້າ, ເຄື່ອງຂອງ ຊໍາລະຄ່າພາສີ, ອາກອນ ແລະ ພັນທະອື່ນໆ ພ້ອມທັງຄ່າທໍານຽມ ແລະ ຄ່າບໍລິການ ຂອງຂະແໜງການກ່ຽວຂ້ອງ ແບບລວມສູນ ຜ່ານໜ່ວຍບໍລິການ ຫຼື ລະບົບເອເລັກໂຕຣນິກ ຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ທະນາຄານພັດທະນາລາວ ເຊັ່ນ: ລະບົບ Smart tax, i-Banking, BCEL One Corportate Banking, ເງິນໂອນ ແລະ ເງິນແຊັກ ຕາມລະບຽບການທີ່ກ່ຽວຂ້ອງ;
3. ໃຫ້ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຈັດເກັບຄ່າບໍລິການນໍາໃຊ້ລະບົບດັ່ງກ່າວ ໃນອັດຕາ 120.000 ກີບ (ໜຶ່ງແສນຊາວພັນກີບ) ຕໍ່ການແຈ້ງພາສີເປັນລາຍລະອຽດ 1 ຊຸດ ຕາມທີ່ກໍານົດໄວ້ໃນສັນຍາສໍາປະທານໂຄງການ ຊຶ່ງບໍ່ລວມເອົາຄ່າພາສີ, ຄ່າອາກອນ, ຄ່າທໍານຽມ ແລະ ຄ່າບໍລິການຂອງຂະແໜງການທີ່ກ່ຽວຂ້ອງ;
4. ສໍາລັບຜູ້ປະກອບການ ທີ່ຍັງບໍ່ທັນໄດ້ລົງທະບຽນ ແລະ ຝຶກອົບຮົມການນໍາໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດນັ້ນ ໃຫ້ຮີບຮ້ອນດໍາເນີນຂັ້ນຕອນການລົງທະບຽນ, ອອກລະຫັດຜູ້ນໍາໃຊ້ໂດຍດ່ວນ **ກ່ອນວັນທີ 15 ກໍລະກົດ 2022.** ເລີ່ມແຕ່ວັນທີ 18 ກໍລະກົດ 2022 ເປັນຕົ້ນໄປ ການນໍາເຂົ້າ-ສົ່ງອອກ ທຸກໆປະເພດສິນຄ້າ ແລະ ທຸກໆບໍລິສັດ (ລວມທັງສິນຄ້າປະເພດຍົກເວັ້ນ ຫຼື ງົດເກັບພາສີ) ທີ່ຜ່ານດ່ານພາສີສາກົນຂົວມິດຕະພາບ III, ດ່ານພາສີສາກົນນາເພົ້າ, ຫ້ອງການພາສີປະຈໍາເຂດເສດຖະກິດສະເພາະທ່າແຂກ ແຂວງຄໍາມ່ວນ ຕ້ອງດໍາເນີນການແຈ້ງພາສີເປັນລາຍລະອຽດ ຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດທັງໝົດ;
5. ໃຫ້ກົມພາສີ, ພາສີປະຈໍາແຂວງຄໍາມ່ວນ, ດ່ານພາສີສາກົນຂົວມິດຕະພາບ III, ດ່ານພາສີສາກົນນາເພົ້າ, ຫ້ອງການພາສີປະຈໍາເຂດເສດຖະກິດສະເພາະທ່າແຂກ ແຂວງຄໍາມ່ວນ, ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານພັດທະນາລາວ, ບັນດາບໍລິສັດນໍາເຂົ້າທຸກໆປະເພດສິນຄ້າ, ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ນໍາໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ໃຫ້ສໍາເລັດຕາມລະດັບຄາດໝາຍ;
6. ໃນການຈັດຕັ້ງປະຕິບັດຕົວຈິງຖ້າພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານກົມພາສີ ເພື່ອມີວິທີການແກ້ໄຂໃຫ້ທັນສະພາບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈຂອງແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ.

**ຫົວໜ້າຫ້ອງການ**

ສົມບູນ ອິນທະປັດຖາ

**ບ່ອນນໍາສົ່ງ:**

| | | |
|---|---|---|
| 1. | ຄະນະນໍາກະຊວງການເງິນ | 3 ສະບັບ; |
| 2. | ກະຊວງອຸດສາຫະກໍາ ແລະ ການຄ້າ | 1 ສະບັບ; |
| 3. | ກະຊວງໂຍທາທິການ ແລະ ຂົນສົ່ງ | 1 ສະບັບ; |
| 4. | ກະຊວງສາທາລະນະສຸກ | 1 ສະບັບ; |
| 5. | ກະຊວງກະສິກໍາ ແລະ ປ່າໄມ້ | 1 ສະບັບ; |
| 6. | ທະນາຄານແຫ່ງ ສປປ ລາວ | 1 ສະບັບ; |
| 7. | ຫ້ອງການ ກະຊວງການເງິນ | 1 ສະບັບ; |
| 8. | ພະແນກການເງິນ ແຂວງຄໍາມ່ວນ | 1 ສະບັບ; |
| 9. | ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ | 1 ສະບັບ. |

**ຜູ້ປະສານງານ:**
ທ່ານ ນາງ ອິນທະສອນ ໄຊຍະນາສີ 020 28145652
ທ່ານ ນາງ ເພັດດາວັນ ແກ້ວພະຈັນ 020 28035751